Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC



# *Vocational Training & Employment Support Services (VTESS) project – Lao PDR*

**The goal of the Vocational Training and Employment Support Services (VTESS) project is to improve the income and ultimately the livelihood of the main project beneficiaries, who are people between 15 and 35 years of age,** have completed primary and/ or lower secondary education (early school leavers), and are subjected to income poverty. The project aims at vocational training and labour market insertion or re-entering of schooling of its main beneficiaries. The project is implemented in the provinces of Oudomxay, Xayaboury, Xiengkhuang, Khammuane, Saravane and in the capital of Vientiane. **It consists of 4 interrelated components:**

**CMP1- Integrated Vocational Education and Training (IVET):** This component comprises market-relevant skills training for Certificate 1, 2, 3 level, the Equivalency Programme (EP) (vocational training back-to-back with general education), and outreach training (vocational training in more remote locations) and prepares beneficiaries for wage or self-employment or the opportunity to enrol in further education and training. This component is closely related to CMP2 for the development of job-seeking skills.

**CMP2- Employment Support Services (ESS):** This component involves beneficiaries in a coaching cycle process over 9 months comprising of pre-training preparation, selection of, and undertaking skills training and post-training support to get into wage or self-employment. It provides beneficiaries information on job vacancies in the labour market, skills training, and job seeking skills. This component is closely linked to CMP3 for self-employment.

**CMP3- Entrepreneurship Promotion:** This component aims to support potential beneficiaries of the coaching cycle with the option of becoming self-employed and starting a microenterprise. Beneficiaries are provided with training for basic entrepreneurship skills, support for business plan development, and application for seed money (SM). Successful SM recipients are provided with business coaching during 6 months from their business start-up.

**CMP4- TVET Development Fund (TDF):** This component aims to contribute to the TDF, which is currently in early stages of being established, specifically to create a funding window for activities outlined in the other three components above.

***The project introduces new innovations for Laos such as the EP, ESS, and TDF and expects that the government of Lao PDR increasingly adopts these as integral parts of a more inclusive TVET system with the necessary capacities to provide more demand-driven, needs-based, and quality IVET and Employment Support Services (ESS), which are recognised and increasingly funded by government and the private sector.***

**Project duration:** Phase 1: Aug 2019 to November 2023; Phase 2: December 2023 to November 2027
**Funded by:** Swiss Agency for Development and Cooperation
**Implementer:** Consortium Swisscontact / Lucerne University of Applied Sciences and Arts
**Key government partners:**

- Ministry of Education and Sports - MoES (Lead)
- Ministry of Labour and Social Welfare - MoLSW

**Target Groups:**

- Main traget: people of 15-35 years' of age who have completed primary and/ or lower secondary education and are subjected to income poverty
- Wider: Teachers, coaches and other key staff from project implementation partners in the provinces and in Vieniane such as IVET schools, Women & Youth Unions, Not for Profit Associations (NPAs), Enterprises and others



vtess
Vocational Training & Employment Support Services

HSLU Lucerne University of Applied Sciences and Arts

swisscontact

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC



## *ໂຄງການຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທຳ - ສປປ ລາວ*

**ໂຄງການ ຝຶກອົບຮົມວິຊາຊີບ ແລະ ສະໜັບສະໜູນການມີວຽກເຮັດງານທຳ ມີເປົ້າໝາຍເລັງໃສ່ການຍົກລະດັບລາຍຮັບ ແລະ ປັບປຸງຊີວິດການເປັນຢູ່ຂອງຜູ້ໄດ້ຮັບຜົນປະໂຫຍດຂອງໂຄງການ, ເຊິ່ງມີອາຍຸລະຫວ່າງ 15 ຫາ 35 ປີ,** ຮຽນຈົບຊັ້ນປະຖົມ ແລະ/ຫຼື ມັດທະຍົມຕອນຕົ້ນ (ຜູ້ຮຽນບໍ່ຈົບ ມ ຕົ້ນ) ແລະ ມີລາຍໄດ້ຕ່ຳ. ໂຄງການໃຫ້ການສະໜັບສະໜູນ ການຝຶກອົບຮົມອາຊີບ ແລະ ເຂົ້າເຖິງຕະຫຼາດແຮງງານ ຫຼື ກັບຄືນເຂົ້າລະບົບການສຶກສາໃໝ່ຂອງຜູ້ໄດ້ຮັບຜົນປະໂຫຍດ ໂຄງການຂອງພວກເຮົາດຳເນີນຢູ່ແຂວງ: ອຸດົມໄຊ, ໄຊຍະບູລີ, ຊຽງຂວາງ, ຄຳມ່ວນ, ສາລະວັນ ແລະ ນະຄອນຫຼວງວຽງຈັນ **ເຊິ່ງມີ 4 ອົງປະກອບທີ່ກ່ຽວພັນກັນດັ່ງນີ້:**

**ອົງປະກອບທີ 1 - ການຝຶກອົບຮົມວິຊາຊີບ ແລະ ເສັ້ນທາງເຊື່ອມຕໍ່:** ອົງປະກອບນີ້ ແນໃສ່ການຝຶກອົບຮົມວິຊາຊີບໃນລະດັບ 1, 2, 3 ທີ່ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດແຮງງານ, ການຝຶກອົບຮົມວິຊາຊີບ ຄູ່ຂະໜານກັບການຍົກລະດັບການສຶກສາ ມ ຕົ້ນ (ຫຼັກສູດຄູ່ຂະໜານ/EP), ການຝຶກອົບຮົມໄລຍະສັ້ນ (ການຝຶກອົບຮົມໃນພື້ນທີ່ຮ່າງໄກສອກຫຼີກ) ແລະ ກະກຽມຄວາມພ້ອມໃນການຊອກວຽກ ຫຼື ການກາຍເປັນຜູ້ປະກອບການ ຫຼື ໂອກາດໃນການສຶກສາ ຫຼື ການຝຶກອົບຮົມໃນລະດັບສູງຂຶ້ນ. ອົງປະກອບນີ້ມີຄວາມກ່ຽວພັນຢ່າງໃກ້ຊິດກັບອົງປະກອບ 2 ໂດຍສະເພາະ ການພັດທະນາທັກສະໃນການຊອກວຽກເຮັດງານທຳ.

**ອົງປະກອບທີ 2 - ການໃຫ້ຄຳປຶກສາ ແລະ ສະໜັບສະໜູນການມີວຽກເຮັດງານທຳ:** ອົງປະກອບນີ້ ຈະນຳເອົາຊາວໜຸ່ມ/ ຜູ້ໄດ້ຮັບຜົນປະໂຫຍດເຂົ້າຮ່ວມວົງຈອນການໃຫ້ຄຳປຶກສາເປັນເວລາ 9 ເດືອນ ເພື່ອກະກຽມຕົວກ່ອນການຝຶກອົບຮົມ, ການຄົ້ນຫາຊ່ອງທາງອາຊີບ ແລະ ການເຂົ້າຮ່ວມຝຶກອົບຮົມອາຊີບ ແລະ ການສະໜັບສະໜູນຊອກວຽກເຮັດງານທຳ ຫຼື ການກາຍເປັນຜູ້ປະກອບການ/ປະກອບອາຊີບດ້ວຍຕົນເອງ ໂດຍຜ່ານການສະໜອງຂໍ້ມູນດ້ານການຈ້າງງານໃນຕະຫຼາດ ແຮງງານ, ການຝຶກອົບຮົມວິຊາຊີບ ແລະ ທັກສະໃນການຊອກວຽກ ໃຫ້ແກ່ຜູ້ທີ່ໄດ້ຮັບຜົນປະໂຫຍດ. ອົງປະກອບນີ້ໄດ້ມີຄວາມເຊື່ອມໂຍງກັບອົງປະກອບ 3 ໃນການປະກອບອາຊີບຕົນເອງ/ການກາຍເປັນຜູ້ປະກອບການ.

**ອົງປະກອບທີ 3 - ການສົ່ງເສີມການກາຍເປັນຜູ້ປະກອບການ:** ອົງປະກອບນີ້ ເລັງໃສ່ສະໜັບສະໜູນຜູ້ຈົບຈາກວົງຈອນການໃຫ້ຄຳປຶກສາ ທີ່ສົນໃຈ ປະກອບອາຊີບດ້ວຍຕົນເອງແລະລິເລີ່ມທຸລະກິດຂະໜາດນ້ອຍ. ຜູ້ໄດ້ຮັບຜົນປະໂຫຍດຈະໄດ້ຮັບການຝຶກອົບຮົມທັກສະພື້ນຖານການກາຍເປັນຜູ້ປະກອບການ, ການພັດທະນາແຜນທຸລະກິດ ແລະ ການສະໝັກຂໍທຶນລິເລີ່ມທຸລະກິດ. ພາຍຫຼັງໄດ້ຮັບທຶນ ແລະ ໃນຊ່ວງເລີ່ມຕົ້ນທຸລະກິດ ເຂົາເຈົ້າຍັງຈະໄດ້ຮັບການສະໜູບສະໜູນ ແລະ ຕິດຕາມການດຳເນີນທຸລະກິດເປັນໄລຍະເວລາ 6 ເດືອນ.

**ອົງປະກອບທີ 4 - ສະໜັບສະໜູນກອງທຶນພັດທະນາອາຊີວະສຶກສາ:** ອົງປະກອບນີ້ມີຈຸດປະສົງປະກອບສ່ວນໃນການພັດທະນາກອງທຶນອາຊີວະສຶກສາ (ອສ) ເຊິ່ງປັດຈຸບັນແມ່ນຢູ່ໃນໄລຍະເລີ່ມຕົ້ນໃນການຈັດຕັ້ງປະຕິບັດ ແນໃສ່ສ້າງ ແລະ ພັດທະນາຮູບແບບການສະໜອງທຶນ ໃຫ້ແກ່ກິດຈະກຳຕ່າງໆ ທີ່ລະບຸໄວ້ໃນ 3 ອົງປະກອບຂ້າງເທິງ.

*ໂຄງການນີ້ ໄດ້ນຳເອົາແນວຄວາມຄິດແບບໃໝ່ ເພື່ອປັບໃຊ້ເຂົ້າໃນສະພາບຂອງ ສປປ ລາວ ເຊັ່ນ: ການທົດລອງຫຼັກສູດຄູ່ຂະໜານ, ການສະໜັບສະໜູນການມີວຽກເຮັດງານທຳ ແລະ ການພັດທະນາຮູບແບບການສະໜອງທຶນ ພາຍໃຕ້ກອງທຶນພັດທະນາ ອສ ແລະ ຄາດຫວັງວ່າລັດຖະບານ ສປປ ລາວ ຈະນຳເອົາສິ່ງເຫຼົ່ານີ້ມາຜັນຂະຫຍາຍໃຫ້ເປັນສ່ວນໜຶ່ງຂອງລະບົບອາຊີວະສຶກສາ ແລະ ພັດທະນາຄວາມອາດສາມາດທີ່ຈຳເປັນ ເພື່ອສະໜອງການຝຶກອົບຮົມວິຊາຊີບໃຫ້ມີຄວາມຫຼາກຫຼາຍ, ແທດເໝາະຄວາມຕ້ອງການ, ປັບປຸງຄຸນນະພາບການຮຽນ-ການສອນວິຊາຊີບ, ການໃຫ້ຄຳປຶກສາ ແລະ ສະໜັບສະໜູນການມີວຽກເຮັດງານທຳ ທີ່ໄດ້ຮັບການຍອມຮັບ ແລະ ໄດ້ຮັບການສະໜັບສະໜູນຈາກພາກລັດ ແລະ ພາກເອກະຊົນໃນອະນາຄົດ.*

**ໄລຍະເວລາຂອງໂຄງການ:** ໄລຍະທີ 1: ເດືອນສິງຫາ 2019 - ພະຈິກ 2023; ໄລຍະທີ 2: ທັນວາ 2023 - ພະຈິກ 2027
**ໃຫ້ທຶນໂດຍ:** ອົງການເພື່ອການພັດທະນາ ແລະ ການຮ່ວມມື ປະເທດສະວິດເຊີແລນ (SDC)
**ຜູ້ຈັດຕັ້ງປະຕິບັດ:** ອົງການສະວິດຄອນແທັກ/ມະຫາວິທະຍາໄລ ວິທະຍາສາດປະຍຸກ ແລະ ສິລະປະກຳສາດ (Lucerne University)
**ຄູ່ຮ່ວມງານຫຼັກຈາກພາກລັດຖະບານ:**

- ກະຊວງສຶກສາທິການ ແລະ ກິລາ (ຄູ່ຮ່ວມງານຫຼັກ)
- ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

**ກຸ່ມເປົ້າໝາຍ:**

- **ເປົ້າໝາຍຫຼັກ:** ຜູ້ທີ່ມີອາຍຸ 15 - 35 ປີ ທີ່ຈົບປະຖົມ ແລະ ຈົບມັດທະຍົມຕົ້ນ ຫຼື ບໍ່ຈົບມັດທະຍົມຕົ້ນ ແລະ ມີຄວາມທຸກຍາກລາຍຮັບຕ່ຳ
- **ວົງກວ້າງ:** ຄູອາຈານ, ຄູຝຶກ ແລະ ພະນັກງານຫຼັກອື່ນໆ ຈາກຄູ່ຮ່ວມງານໃນການຈັດຕັ້ງປະຕິບັດໂຄງການ ໃນບັນດາແຂວງເປົ້າໝາຍ ແລະ ນະຄອນຫຼວງວຽງຈັນ ເຊັ່ນ: ໂຮງຮຽນອາຊີວະສຶກສາ, ແມ່ຍິງ ແລະ ໄວໜຸ່ມ, ອົງການບໍ່ສະແຫວງຫາຜົນກຳໄລ, ບັນດາວິສາຫະກິດ ແລະ ອື່ນໆ



vtess
Vocational Training & Employment Support Services

HSLU Lucerne University of Applied Sciences and Arts

swisscontact